ວາລະສານ

# ກະສິກຳ ແລະ ປ່າໄມ້

ປະຈຳ ອາທິດວັນທີ 16 ຫາ 20 ທັນວາ 2024




ພິທີມອບ-ຮັບ ແລະ ເປີດນຳໃຊ້ຖ້ຳກະສິກຳຢ່າງເປັນທາງການ

ຫ້ອງການກະຊວງກະສິກຳ ແລະ ປ່າໄມ້




# ພິທີມອບ-ຮັບ ແລະ ເປີດນຳໃຊ້ຖ້ຳກະສິກຳ ຢ່າງເປັນທາງການ

ພາບ-ຂ່າວໂດຍ: ພະແນກໂຄສະນາ ແລະ ຂ່າວສານ

ໃນວັນທີ 29 ພະຈິກ 2024 ຜ່ານມານີ້ ໄດ້ມີພິທີ ມອບ-ຮັບ ແລະ ເປີດນຳໃຊ້ຖ້ຳກະສິກຳ ຢ່າງເປັນທາງການ ໂດຍໃຫ້ກຽດເຂົ້າຮ່ວມເປັນປະທານ ແລະ ເປີດປ້າຍອະນຸສອນສະຖານຖ້ຳປະຫວັດສາດແຫ່ງນີ້ໂດຍທ່ານ ປອ ລິນຄຳ ດວງສະຫວັນ ລັດຖະມົນຕີກະຊວງກະສິກຳແລະປ່າໄມ້, ເຂົ້າຮ່ວມມີ ທ່ານ ພອນສຸກ ອິນທະວົງ ຮອງເຈົ້າແຂວງຫົວພັນ, ອົງການປົກຄອງທ້ອງຖິ່ນຂັ້ນເມືອງຂັ້ນບ້ານ, ຫົວໜ້າກົມຮອງຫົວໜ້າກົມ, ຕາງໜ້າຈາກພະແນກກະສິກຳ ແລະ ປ່າໄມ້ ແຂວງ ພ້ອມດ້ວຍພາກສ່ວນກ່ຽວຂ້ອງຈາກສູນກາງ ແລະ ທ້ອງຖິ່ນເຂົ້າຮ່ວມ, ໃນພິທີ ທ່ານ ສີສະຫວາດ ທອມດາລາ ຮອງຫົວໜ້າຫ້ອງການກະຊວງກະສິກຳ ແລະ ປ່າໄມ້ໄດ້ຂຶ້ນລາຍງານຄວາມເປັນມາຂອງໂຄງການບູລະນະຖ້ຳກະສິກຳໃຫ້ຮູ້ວ່າຖ້ຳແຫ່ງນີ້ມີທີ່ຕັ້ງຢູ່ບ້ານພູໄຊ, ເມືອງວຽງໄຊ ແຂວງຫົວພັນ ຫ່າງຈາກຕົວເມືອງວຽງໄຊ ປະມານ 2 ກິໂລແມັດ ມີເນື້ອທີ່ປະມານ 3,326 ຕາແມັດ, ເຊິ່ງໄດ້ເລີ່ມຈັດຕັ້ງປະຕິບັດໂຄງການບູນະລະມາແຕ່ປີ 2019 ໂດຍແມ່ນບໍລິສັດ ບຸນເຮືອງກໍ່ສ້າງ ເປັນບໍລິສັດທີ່ຊະນະການປະມູນກໍ່ສ້າງປັບປຸງໂຄງການບູລະນະຖ້ຳກະສິກຳແມ່ນມີມູນຄ່າການບູລະນະປົວແປງທັງໝົດ 3.5 ຕື້ກວ່າກີບ, ເຊິ່ງມາຮອດປັດຈຸບັນແມ່ນສຳເລັດ 100%, ເນື່ອງຈາກຖ້ຳແຫ່ງນີ້ແມ່ນມີມູນເຊື້ອທາງດ້ານປະຫວັດຕິດພັນກັບຂະແໜງການ

ກະສິກຳ ແລະ ປ່າໄມ້. ສະນັ້ນ, ເພື່ອສ້າງໃຫ້ເປັນບ່ອນລະນຶກຂອງສະຖານທີ່ປະຫວັດຂອງຂອງກະແໜງການ ຈຶ່ງໄດ້ຈັດພິທີ ມອບ-ຮັບ ແລະ ເປີດນຳໃຊ້ຖ້ຳກະສິກຳຢ່າງເປັນທາງການຂຶ້ນ ເຊິ່ງພາຍຫຼັງການມອບຮັບຄັ້ງນີ້ແລ້ວ ຫ້ອງການກະສິກຳ ແລະ ປ່າໄມ້ ເມືອງວຽງໄຊ ຈະເປັນຜູ້ຄຸ້ມຄອງ, ໂດຍການຈັດພະນັກງານວິຊາການມາປະຈຳການ ແລະ ເປີດບໍລິການເປັນສະຖານທີ່ສຳລັບຝຶກອົບຮົມ, ປະຊຸມ-ສຳມະນາ, ເປັນບ່ອນຮຽນຮູ້ທັງເປັນສະຖານທີ່ທ່ອງທ່ຽວ, ຂາຍເຄື່ອງທີ່ລະນຶກ ແລະ ຜະລິດຕະພັນກະສິກຳ ອື່ນໆນຳອີກ.









**ຄະນະຮັບຜິດຊອບ:**
ທ່ານ ສີປະໄພ ໄຊສີງຄານ
ທ່ານ ສີສະຫວາດ ທອນດາລາ

**ບັນນາທິການ:**
ທ່ານ ກິດຊະນະ ພົມມະຈັນ
ທ່ານ ໄຊລາ ສີມມະລາວົງ
ທ່ານ ນ. ທອງພຸດ ວົງພະຈັນ
ທ່ານ ນ. ຄຳແພງ ເກສອນ

**ຈັດໜ້າອອກແບບໂດຍ:**
ທ່ານ ນ. ສີອຳມອນ ໄຊຍະລາດ

ຕິດຕໍ່ ແລະ ລົງໂຄສະນາໄດ້ທີ່: ພະແນກໂຄສະນາ ແລະ ຂ່າວສານ, ຫ້ອງການກະຊວງ 021 410154;
website: www.maf.gov.la;
Facebook: ຂ່າວສານກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ;
Youtube: ລາຍການກະສິກຳ;ແລະ ປ່າໄມ້;